ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: .................
ຂະໜາດພິມ: 21x29,7 cm, ຈຳນວນ:........... ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2014
ສະຫງວນລິຂະສິດ

ປຶດເຝິກຫັດ

# ໜ່ວຍທຳມະຊາດອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

# ປຶ້ມຝຶກຫັດ

# ໜ່ວຍທຳມະຊາດອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາ ປີທີ 2


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ບານໃຈ ມາລາວົງ
ພູມະລີ ແສງຈັນນະວົງ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ

ພິມເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ທອງດຳ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍທຳມະຊາດອ້ອມຕົວເຮົາເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງທຳມະຊາດອ້ອມຕົວເຮົາມີດັ່ງນີ້:

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ບໍ່ມີຊີວິດ.
3. ລະດູການ.
4. ເວລາ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍທຳມະຊາດອ້ອມຕົວເຮົາ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

**ໜ້າ**


ກິດຈະກຳການຮຽນ-ການສອນ ໜ່ວຍທຳມະຊາດອ້ອມຕົວເຮົາ ........ 1
ສິ່ງທີ່ມີຊີວິດ........ 2
ສິ່ງທີ່ມີຊີວິດ........ 3
ການຈະເລີນເຕີບໃຫຍ່ຂອງຄົນ........ 4
ການຈະເລີນເຕີບໃຫຍ່ຂອງຄົນ ........ 5
ການຈະເລີນເຕີບໃຫຍ່ຂອງຄົນ ........ 6
ຄວາຍ ແລະ ທີ່ຢູ່ອາໄສ........ 7
ນົກ ແລະ ທີ່ຢູ່ອາໄສ ........ 8
ເປັດ ແລະ ທີ່ຢູ່ອາໄສ........ 9
ສັດນ້ຳ ແລະ ທີ່ຢູ່ອາໄສ........ 10
ຜັກ ແລະ ປະໂຫຍດຂອງຜັກ........ 11
ມົດແລະ ທີ່ຢູ່ອາໄສ........ 12
ແມງກະເບື້ອ, ແມງເຜີ້ງ ແລະ ທີ່ຢູ່ອາໄສ ........ 13
ສິ່ງທີ່ບໍ່ມີຊີວິດ........ 14
ສິ່ງທີ່ບໍ່ມີຊີວິດ........ 15
ນ້ຳ........ 16
ຊາຍ........ 17
ດິນປູກເຂົ້າ........ 18
ກ້ອນຫີນ........ 19
ລະດູການ........ 20
ລັກສະນະອາກາດໃນປະເທດລາວ........ 21
ສະພາບອາກາດຍາມຝົນ........ 22
ສະພາບອາກາດຍາມຮ້ອນ........ 23
ສະພາບອາກາດຍາມໜາວ........ 24
ປະໂຫຍດຂອງອາກາດ........ 25
ປະໂຫຍດຂອງອາກາດຍາມຮ້ອນ........ 26
ປະໂຫຍດຂອງອາກາດຍາມໜາວ........ 27
ຜົນສະທ້ອນຂອງອາກາດ........ 28
ການປະຕິບັດຕົນໃນຍາມຝົນ ແລະ ຍາມໜາວ........ 29

ການປະຕິບັດຕົນໃນຍາມຮ້ອນ.......................................................................................... 30
ເວລາ...........................................................................................................................31
ເວລາໃນ 1 ມື້............................................................................................................... 32
ກິດຈະກຳໃນເວລາເຊົ້າ, ສວາຍ ແລະ ແລງ...................................................................... 33
ວັນໃນ 1 ອາທິດ............................................................................................................ 34
ວັນພັກຜ່ອນ.................................................................................................................. 35
ກິດຈະກຳໃນວັນເສົາ ແລະ ວັນອາທິດ............................................................................ 36

# ກິດຈະກຳການຮຽນ-ການສອນ
# ໜ່ວຍທຳມະຊາດອ້ອມຕົວເຮົາ



**ຫົວຂໍ້ເນື້ອໃນການຮຽນຂອງແຕ່ລະອາທິດໜ່ວຍທຳມະຊາດອ້ອມຕົວເຮົາປະກອບມີ:**

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ບໍ່ມີຊີວິດ.
3. ລະດູການ.
4. ເວລາ.

# ສິ່ງທີ່ມີຊີວິດ



**ຫົວຂໍ້ເນື້ອໃນການຮຽນອາທິດທີ 1 ສິ່ງທີ່ມີຊີວິດ:**

1. ສິ່ງທີ່ມີຊີວິດ.
2. ການຈະເລີນເຕີບໃຫຍ່ຂອງຄົນ.
3. ສັດ ແລະ ທີ່ຢູ່ອາໄສ.
4. ຜັກ ແລະ ປະໂຫຍດ.
5. ແມງໄມ້ ແລະ ທີ່ຢູ່ອາໄສ.

# ສິ່ງທີ່ມີຊີວິດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິ່ງທີ່ມີຊີວິດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສິ່ງທີ່ຫຼານເຫັນແມ່ນສິ່ງທີ່ມີຊີວິດບໍ?
- ໃຫ້ເດັກນ້ອຍສະຫຼຸບ: ຄົນ, ສັດ, ແມງໄມ້ ແລະ ພືດແມ່ນສິ່ງທີ່ມີຊີວິດ.
- ໃຫ້ເດັກນ້ອຍທາສີຮູບຄົນ, ສັດ, ແມງໄມ້ ແລະ ພືດ ໂດຍນຳໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຄົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຈະເລີນເຕີບໃຫຍ່ຂອງຄົນຕາມໄລຍະອາຍຸ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ?
- ໃຫ້ເດັກນ້ອຍສະຫຼຸບ: ການຈະເລີນເຕີບໃຫຍ່ຂອງຄົນຕາມໄລຍະອາຍຸເດັກນ້ອຍ ມີນ້ອງ ແລະ ອ້ອຍ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຄົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຈະເລີນເຕີບໃຫຍ່ຂອງຄົນຕາມໄລຍະອາຍຸ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ?
- ໃຫ້ເດັກນ້ອຍສະຫຼຸບ: ການຈະເລີນເຕີບໃຫຍ່ຂອງຄົນຕາມໄລຍະອາຍຸຜູ້ໃຫຍ່ ມີເອື້ອຍ ແລະ ອ້າຍ.
- ໃຫ້ເດັກນ້ອຍທາສີຮູບຜູ້ໃຫຍ່ ໂດຍນຳໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຄົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຈະເລີນເຕີບໃຫຍ່ຂອງຄົນຕາມໄລຍະອາຍຸ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ? ຫຼານມີພໍ່ເຖົ້າ ແລະ ແມ່ເຖົ້າ ຫຼື ພໍ່ຕູ້ ແລະ ແມ່ຕູ້ບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການຈະເລີນເຕີບໃຫຍ່ຂອງຄົນຕາມໄລຍະອາຍຸຜູ້ເຖົ້າ ມີພໍ່ເຖົ້າ ແລະ ແມ່ເຖົ້າ.
- ໃຫ້ເດັກນ້ອຍທາສີຮູບຜູ້ເຖົ້າ ໂດຍນຳໃຊ້ສີຕາມໃຈ.

# ຄວາຍ ແລະ ທີ່ຢູ່ອາໄສ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດ ແລະ ທີ່ຢູ່ອາໄສຂອງສັດບົກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄວາຍແມ່ນສັດປະເພດໃດ? ຄວາຍອາໄສຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ຄວາຍແມ່ນສັດບົກ, ຄວາຍອາໄສຢູ່ໃນຄອກ.
- ໃຫ້ເດັກນ້ອຍທາສີຮູບຄວາຍ ໂດຍນຳໃຊ້ສີຕາມໃຈ.

# ນົກ ແລະ ທີ່ຢູ່ອາໄສ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດ ແລະ ທີ່ຢູ່ອາໄສຂອງສັດປີກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ນົກແມ່ນສັດປະເພດໃດ? ນົກອາໄສຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ນົກແມ່ນສັດປີກ, ນົກອາໄສຢູ່ໃນຮັງ.
- ໃຫ້ເດັກນ້ອຍທາສີຮູບຕົ້ນໄມ້, ນົກ ແລະ ຮັງນົກ ໂດຍນຳໃຊ້ສີຕາມໃຈ.

# ເປັດ ແລະ ທີ່ຢູ່ອາໄສ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດ ແລະ ທີ່ຢູ່ອາໄສຂອງສັດປີກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເປັດແມ່ນສັດພວກໃດ? ເປັດອາໄສຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ເປັດແມ່ນສັດປີກ, ເປັດອາໄສຢູ່ໃນລົກ.
- ໃຫ້ເດັກນ້ອຍທາສີຮູບເປັດ ໂດຍນຳໃຊ້ສີຕາມໃຈ.

# ສັດນ້ຳ ແລະ ທີ່ຢູ່ອາໄສ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດ ແລະ ທີ່ຢູ່ອາໄສຂອງສັດນ້ຳ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ກະປູ, ກຸ້ງ, ຫອຍແມ່ນສັດປະເພດໃດ? ກະປູ, ກຸ້ງ, ຫອຍອາໄສຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ກະປູ, ກຸ້ງ, ຫອຍແມ່ນສັດນ້ຳ; ກະປູອາໄສໃນຮູ ແລະ ຂີ້ຕົມ; ກຸ້ງ, ຫອຍອາໄສຢູ່ໃນນ້ຳ ແລະ ຂີ້ຕົມ.
- ໃຫ້ເດັກນ້ອຍທາສີຮູບສັດ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ຜັກ ແລະ ປະໂຫຍດຂອງຜັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ປະໂຫຍດຂອງຜັກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຮູບຜັກຫຍັງແດ່? ຜັກໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ດອກຜັກກາດ, ດອກກະລ່ຳ, ໝາກອຶ, ໝາກແຕງ, ຜັກສະຫຼັດ, ຜັກຫົມ, ຜັກຕຳນິນ ແລະ ໝາກຖົ່ວ; ຜັກໃຊ້ໄວ້ເປັນອາຫານຂອງຄົນ ແລະ ສັດ.
- ໃຫ້ເດັກນ້ອຍທາສີຮູບຜັກ ໂດຍນຳໃຊ້ສີຕາມໃຈ.

# ມົດ ແລະ ທີ່ຢູ່ອາໄສ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ທີ່ຢູ່ອາໄສຂອງແມງໄມ້.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນແມງໄມ້ຫຍັງແດ່? ມົດສົ້ມ ແລະ ມົດແດງຊາຍອາໄສຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ມົດສົ້ມອາໄສຢູ່ໃນຮັງເທິງຕົ້ນໄມ້ ແລະ ມົດແດງຊາຍອາໄສຢູ່ພື້ນດິນ.
- ໃຫ້ເດັກນ້ອຍທາສີຮູບຕົ້ນໄມ້ ແລະ ມົດ ໂດຍນຳໃຊ້ສີຕາມໃຈ.

# ແມງກະເບື້ອ, ແມງເຜີ້ງ ແລະ ທີ່ຢູ່ອາໄສ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ທີ່ຢູ່ອາໄສຂອງແມງໄມ້.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນແມງໄມ້ຫຍັງແດ່? ແມງກະເບື້ອ ແລະ ແມງເຜີ້ງ ພວກມັນອາໄສຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ແມງກະເບື້ອອາໄສຢູ່ຕົ້ນດອກໄມ້ ແລະ ແມງເຜີ້ງອາໄສຢູ່ໃນຮັງເທິງຕົ້ນໄມ້.
- ໃຫ້ເດັກນ້ອຍທາສີຮູບຕົ້ນດອກໄມ້, ຕົ້ນໄມ້ ແລະ ແມງໄມ້ ໂດຍນຳໃຊ້ສີຕາມໃຈ.

# ສິ່ງທີ່ບໍ່ມີຊີວິດ



**ຫົວຂໍ້ເນື້ອໃນການຮຽນອາທິດທີ 2 ສິ່ງທີ່ບໍ່ມີຊີວິດ:**

1. ສິ່ງທີ່ບໍ່ມີຊີວິດ.
2. ນ້ຳ.
3. ຊາຍ.
4. ດິນ.
5. ຫີນ.

# ສິ່ງທີ່ບໍ່ມີຊີວິດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ສິ່ງທີ່ບໍ່ມີຊີວິດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຈັບ ຫຼື ຫຼິ້ນນ້ຳ, ຫີນ, ດິນ ແລະ ຊາຍບໍ?
- ໃຫ້ເດັກນ້ອຍສະຫຼຸບ: ສິ່ງທີ່ບໍ່ມີຊີວິດມີນ້ຳ, ຫີນ, ດິນ ແລະ ຊາຍ.
- ໃຫ້ເດັກນ້ອຍທາສີຮູບນ້ຳ, ຫີນ, ດິນ ແລະ ຊາຍ ໂດຍນຳໃຊ້ສີຕາມໃຈ.

# ນ້ຳ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປ່ຽນແປງສະພາບຂອງນ້ຳ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍດື່ມນ້ຳອຸ່ນ, ນ້ຳເຢັນບໍ?
- ໃຫ້ເດັກນ້ອຍສະຫຼຸບ: ນ້ຳມີການປ່ຽນແປງສະພາບຂອງນ້ຳເປັນນ້ຳຮ້ອນ, ນ້ຳອຸ່ນ, ນ້ຳເຢັນ ແລະ ນ້ຳກ້ອນ.
- ໃຫ້ເດັກນ້ອຍທາສີຮູບໝໍ້ນ້ຳ, ໂຖນ້ຳກ້ອນ ແລະ ຈອກນ້ຳ ໂດຍນຳໃຊ້ສີຕາມໃຈ.

# ຊາຍ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງຊາຍ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນຊາຍບໍ?
- ໃຫ້ເດັກນ້ອຍສະຫຼຸບ: ຊາຍເປັນດິນທີ່ບໍ່ລະອຽດ ແລະ ບໍ່ອົມນ້ຳ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຍິງ ແລະ ຊາຍ ໂດຍນຳໃຊ້ສີຕາມໃຈ.

# ດິນປູກເຂົ້າ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງດິນປູກເຂົ້າ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນດິນບໍ?
- ໃຫ້ເດັກນ້ອຍສະຫຼຸບ: ດິນປູກເຂົ້າເປັນດິນທີ່ມີເສດຕົ້ນເຂົ້າ ຫຼື ຕໍເຟືອງ, ຫີນ ແລະ ຊາຍປົນຢູ່ນຳ.
- ໃຫ້ເດັກນ້ອຍທາສີຮູບດິນ ໂດຍນຳໃຊ້ສີຕາມໃຈ.

# ກ້ອນຫີນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ສີກ້ອນຫີນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍຈັບກ້ອນຫີນບໍ? ລັກສະນະກ້ອນຫີນເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະກ້ອນຫີນແຂງ, ກ້ຽງ ຊາ, ມີສີດຳ, ຂາວ ແລະ ເຫຼືອງ.
- ໃຫ້ເດັກນ້ອຍທາສີຮູບກ້ອນຫີນ ແລະ ເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ລະດູການ







**ຫົວຂໍ້ເນື້ອໃນການຮຽນອາທິດທີ 3 ລະດູການ:**

1. ລັກສະນະອາກາດໃນປະເທດລາວ.
2. ສະພາບອາກາດ.
3. ປະໂຫຍດຂອງອາກາດ.
4. ຜົນສະທ້ອນຂອງອາກາດ.
5. ການປະຕິບັດຕົນທີ່ເໝາະສົມກັບສະພາບອາກາດ.

# ລັກສະນະອາກາດໃນປະເທດລາວ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະອາກາດໃນປະເທດລາວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນຝົນຕົກບໍ? ຍາມໜາວອາກາດຈະເປັນແນວໃດ? ເວລາມີແສງແດດກ້າຫຼານຮູ້ສຶກແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະອາກາດໃນປະເທດລາວມີ 3 ລັກສະນະ: ຮ້ອນ, ໜາວ ແລະ ຝົນຕົກ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ສະພາບອາກາດຍາມຝົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສະພາບອາກາດຍາມຝົນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ກ່ອນຝົນຈະຕົກ ທ້ອງຟ້າ ເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ສະພາບອາກາດກ່ອນຝົນຕົກທ້ອງຟ້າມືດ, ມີລົມພັດແຮງ, ມີສຽງຟ້າຮ້ອງ ແລະ ມີແສງຟ້າແມບເຫຼື້ອມ.
- ໃຫ້ເດັກນ້ອຍທາສີຮູບທ້ອງຟ້າ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ສະພາບອາກາດຍາມຮ້ອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສະພາບອາກາດຍາມຮ້ອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານຮູ້ສຶກແນວໃດເວລາຕາກແດດຫຼາຍ?
- ໃຫ້ເດັກນ້ອຍສະຫຼຸບ: ຍາມຮ້ອນອາກາດຮ້ອນອົບເອົ້າ, ແດດກ້າ ຫຼື ບາງຄັ້ງອາດມີລົມພາຍຸ ແລະ ຝົນຕົກ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ສະພາບອາກາດຍາມໜາວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສະພາບອາກາດຍາມໜາວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ອາກາດໃນຍາມໜາວເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຍາມໜາວອາກາດໜາວເຢັນ ແລະ ບາງຄັ້ງກໍມີນ້ຳໝອກ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງອາກາດຍາມຝົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດຂອງຝົນຕົກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຝົນຕົກເຮັດໃຫ້ດິນຊຸ່ມ, ມີນໍ້າປູກເຂົ້າ, ປູກຜັກ, ມີນໍ້າໄວ້ກິນ, ໄວ້ໃຊ້ ແລະ ຕົ້ນໄມ້ຂຽວງາມ.
- ໃຫ້ເດັກນ້ອຍທາສີຮູບຄືນ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງອາກາດຍາມຮ້ອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດຂອງອາກາດຍາມຮ້ອນ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຄົນກໍາລັງເຮັດຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ຍາມຮ້ອນມີແສງແດດໃຫ້ແສງສະຫວ່າງ, ຕາກເຄື່ອງແຫ້ງໄວ, ໄປ, ມາສະດວກ, ຕົ້ນໄມ້ອອກ ດອກ ແລະ ໝາກ.
- ໃຫ້ເດັກນ້ອຍທາສີຮູບຄົນ, ເຄື່ອງນຸ່ງ, ເຮືອນ, ຕາເວັນ ໂດຍນໍາໃຊ້ສີຕາມໃຈ.

# ປະໂຫຍດຂອງອາກາດຍາມໜາວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະໂຫຍດຂອງອາກາດຍາມໜາວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຍາມໜາວອາກາດໜາວເຢັນ, ມີລົມພັດ, ປູກຜັກ ແລະ ດອກໄມ້ມີສີສັນງາມ.
- ໃຫ້ເດັກນ້ອຍທາສີຮູບຜັກ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ຜົນສະທ້ອນຂອງອາກາດ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຜົນສະທ້ອນຂອງອາກາດຍາມຮ້ອນ, ຍາມໜາວ ແລະ ຍາມຝົນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຖ້າຝົນຕົກຫຼາຍຈະເປັນ ແນວໃດ? ຮ້ອນຫຼາຍດິນ ແລະ ຕົ້ນໄມ້ຈະເປັນແນວໃດ? ອາກາດໜາວຫຼາຍຄົນເຮົາຈະເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຜົນສະທ້ອນໃນຍາມຝົນນ້ຳຂັງ, ເປື້ອນເປິ, ໄປ, ມາບໍ່ສະດວກ ແລະ ຖ້າຝົນຕົກຫຼາຍ ນ້ຳຖ້ວມ; ຍາມຮ້ອນຄົນເປັນພະຍາດຖອກທ້ອງ, ໄຂ້ ແລະ ດິນແຫ້ງແລ້ງ; ຍາມໜາວຄົນເປັນ ໄຂ້ຫວັດ, ເຈັບຄໍ ແລະ ເຮັດໃຫ້ຕົ້ນໄມ້ໃບຫຼົ່ນ.
- ໃຫ້ເດັກນ້ອຍທາສີຮູບຕົ້ນໄມ້ ແລະ ຄົນ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຍາມຝົນ ແລະ ຍາມໜາວ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນທີ່ເໝາະສົມກັບສະພາບອາກາດໃນຍາມຝົນ ແລະ ຍາມໜາວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຍາມໜາວຕ້ອງນຸ່ງເຄື່ອງແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຝົນຕົກຕ້ອງຢູ່ໃນເຮືອນ, ຖ້າອອກຈາກເຮືອນຕ້ອງກັ້ງຄັນຮົ່ມ ຫຼື ນຸ່ງເສື້ອກັນຝົນ. ອາກາດໜາວຕ້ອງນຸ່ງເຄື່ອງກັນໜາວ ຫຼື ເຄື່ອງທີ່ໜາ ແລະ ຍາມນອນຕ້ອງຫົ່ມຜ້າ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຍາມຮ້ອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນທີ່ເໝາະສົມກັບສະພາບອາກາດໃນຍາມຮ້ອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຍາມຮ້ອນຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຍາມຮ້ອນຫຼິ້ນຢູ່ໃນຮົ່ມ, ເດີນທາງໄປມາກັ້ງຄັນຮົ່ມ, ນຸ່ງເຄື່ອງບາງ ແລະ ອາບນ້ຳ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເວລາ




**ຫົວຂໍ້ເນື້ອໃນການຮຽນອາທິດທີ 4 ເວລາ:**

1. ເວລາໃນ 1 ມື້.
2. ກິດຈະກໍາໃນເວລາເຊົ້າ, ສວາຍ ແລະ ແລງ.
3. ວັນໃນ 1 ອາທິດ.
4. ວັນພັກຜ່ອນໃນອາທິດ.
5. ກິດຈະກໍາໃນວັນເສົາ ແລະ ວັນອາທິດ.

# ເວລາໃນ 1 ມື້







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເວລາເຊົ້າ, ສວາຍ, ແລງ ໃນ 1 ມື້.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບໃດບອກເວລາຕອນເຊົ້າ? ຕອນສວາຍ ແລະ ຕອນແລງ? ໃນມື້ໜຶ່ງມີຈັກເວລາ?
- ໃຫ້ເດັກນ້ອຍສະຫຼຸບ: ໃນມື້ໜຶ່ງມີ 3 ເວລາ ເຊົ້າ, ສວາຍ ແລະ ແລງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນໍາໃຊ້ສີຕາມໃຈ.

# ກິດຈະກຳໃນເວລາເຊົ້າ, ສວາຍ ແລະ ແລງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກກິດຈະກຳທີ່ປະຕິບັດໃນເວລາເຊົ້າ, ສວາຍ ແລະ ແລງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍຕື່ນນອນເວລາເຊົ້າຕ້ອງເຮັດຫຍັງແດ່? ເວລາສວາຍເຮັດຫຍັງແດ່? ເວລາແລງເຮັດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເວລາເຊົ້າຕ້ອງອະນາໄມຮ່າງກາຍ, ນຸ່ງເຄື່ອງ, ກິນເຂົ້າ ແລະ ໄປໂຮງຮຽນ; ເວລາສວາຍກິນເຂົ້າທ່ຽງ, ນອນພັກຜ່ອນ; ເວລາແລງຫຼິ້ນ, ຮຽນໜັງສື ແລະ ກັບເມືອເຮືອນ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ວັນໃນ 1 ອາທິດ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ວັນໃນໜຶ່ງອາທິດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ອາທິດໜຶ່ງມີຈັກວັນ?
- ໃຫ້ເດັກນ້ອຍສະຫຼຸບ: ໃນ 1 ອາທິດມີ 7 ວັນ ມີວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ, ວັນສຸກ, ວັນເສົາ ແລະ ວັນອາທິດ.
- ໃຫ້ເດັກນ້ອຍທາສີຮູບຫ້ອງຂອງວັນໃນໜຶ່ງອາທິດ ໂດຍນຳໃຊ້ສີຕາມໃຈ.

# ວັນພັກຜ່ອນໃນອາທິດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກວັນພັກຜ່ອນໃນອາທິດ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໜຶ່ງອາທິດເຮົາພັກຜ່ອນຈັກວັນ? ວັນໃດແດ່ທີ່ເຮົາບໍ່ໄປໂຮງຮຽນ?
- ໃຫ້ເດັກນ້ອຍສະຫຼຸບ: ວັນພັກຜ່ອນໃນອາທິດ ແມ່ນວັນເສົາ ແລະ ວັນອາທິດ, ເຮົາບໍ່ໄປໂຮງຮຽນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນໍາໃຊ້ສີຕາມໃຈ.

# ກິດຈະກຳໃນວັນເສົາ ແລະ ວັນອາທິດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກກິດຈະກຳໃນວັນເສົາ ແລະ ວັນອາທິດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ວັນເສົາ ແລະ ວັນອາທິດ ຫຼານເຮັດຫຍັງຢູ່ເຮືອນ?
- ໃຫ້ເດັກນ້ອຍສະຫຼຸບ: ວັນເສົາ ແລະ ວັນອາທິດ ແມ່ນວັນພັກຜ່ອນຢູ່ເຮືອນນຳພໍ່ ແມ່ ຫຼື ໄປທ່ຽວຫຼິ້ນໃນພໍ່ແມ່.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.